BẢN GHI NHỚ
VỀ
PHÁT TRIỂN VÀ KẾT NỐI HẠ TẦNG THƯƠNG MẠI BIÊN GIỚI
GIỮA
CHÍNH PHỦ NƯỚC CỘNG HÒA XÃ HỘI CHỦ NGHĨA VIỆT NAM
VÀ
CHÍNH PHỦ NƯỚC CỘNG HÒA DÂN CHỦ NHÂN DÂN LÀO

Chính phủ nước Cộng hòa xã hội chủ nghĩa Việt Nam và Chính phủ nước Cộng hòa Dân chủ Nhân dân Lào (dưới đây gọi tắt là "hai Bên" và gọi riêng là "Bên");

Nhằm tăng cường quan hệ hữu nghị vĩ đại, đoàn kết đặc biệt, hợp tác toàn diện, phát triển bền vững, thúc đẩy thương mại biên giới giữa hai nước, trên cơ sở bình đẳng và cùng có lợi,

Hai Bên nhất trí ký kết Bản ghi nhớ này với những nội dung như sau:

Điều 1
Định nghĩa

Trong Bản ghi nhớ này, một số thuật ngữ dưới đây được hiểu như sau:

1. Hạ tầng thương mại biên giới bao gồm chợ biên giới, siêu thị, trung tâm thương mại, trung tâm mua sắm, trung tâm logistics, kho hàng hóa, trung tâm hội chợ, triển lãm trong khu vực các xã, phường, thị trấn đối với Việt Nam, các bản đối với Lào, có một phần địa giới hành chính trùng với đường biên giới quốc gia giữa hai nước Việt Nam – Lào (quy định tại Hiệp định về quy chế quản lý biên giới và cửa khẩu biên giới trên đất liền Việt Nam – Lào năm 2016).

2. Thương nhân bao gồm các tổ chức kinh tế được thành lập hợp pháp, cá nhân và hộ kinh doanh hoạt động thương mại một cách độc lập, thường xuyên và có đăng ký kinh doanh theo quy định pháp luật mỗi nước.

3. Các tỉnh biên giới trong Bản ghi nhớ này bao gồm:

a) Phía Việt Nam: Điện Biên, Sơn La, Thanh Hóa, Nghệ An, Hà Tĩnh, Quảng Bình, Quảng Trị, Thừa Thiên Huế, Quảng Nam, Kon Tum.

b) Phía Lào: Phông Sa Lỳ, Luông Pha Băng, Hủa Phăn, Xiêng Khoảng, Bo Ly Khăm Xay, Khăm Muồn, Sạ Văn Nạ Khệt, Sả Lạ Văn, Xê Kông, Ắt Tạ Pư.

Điều 2
Mục tiêu

Thiết lập và tăng cường sự hợp tác giữa Việt Nam và Lào về phát triển và kết nối hạ tầng thương mại biên giới, trên cơ sở bình đẳng và cùng có lợi, tôn trọng độc lập, chủ

quyền, toàn vẹn lãnh thổ quốc gia, phù hợp với luật pháp quốc gia của mỗi Bên và điều ước quốc tế mà mỗi Bên là thành viên.

Điều 3

Nội dung hợp tác

1. Trao đổi thông tin về tình hình xây dựng và phát triển hạ tầng thương mại biên giới của mỗi Bên;

2. Hỗ trợ xây dựng và phát triển hạ tầng thương mại biên giới hai Bên;

3. Khuyến khích thương nhân Việt Nam và Lào đầu tư xây dựng và phát triển hạ tầng thương mại tại khu vực biên giới;

4. Trao đổi kinh nghiệm về khuôn khổ pháp lý, kế hoạch xây dựng và phát triển hạ tầng thương mại biên giới;

5. Hợp tác phát triển và đào tạo nguồn nhân lực cho các cơ quan quản lý nhà nước và thương nhân của hai Bên trong lĩnh vực phát triển hạ tầng thương mại biên giới;

6. Phối hợp tổ chức các hoạt động xúc tiến thương mại và đầu tư nhằm phát triển hạ tầng thương mại tại khu vực biên giới Việt Nam – Lào; và

7. Các nội dung hợp tác khác do hai Bên cùng thống nhất.

Điều 4

Kinh phí

1. Việc bố trí nguồn tài chính để thực hiện các nội dung hợp tác trong khuôn khổ của Bản ghi nhớ sẽ được hai Bên thống nhất trong từng trường hợp cụ thể trên cơ sở ưu tiên về phát triển và kết nối hạ tầng thương mại biên giới phù hợp với quy định và pháp luật của mỗi nước.

2. Mỗi Bên xem xét bố trí nguồn kinh phí cho từng dự án cụ thể phù hợp với khả năng bố trí nguồn vốn và nguồn lực của mỗi Bên.

Điều 5

Thúc đẩy phát triển hạ tầng thương mại biên giới

1. Hai Bên tiến hành khảo sát chung hạ tầng thương mại biên giới và thống nhất lập danh mục hạ tầng thương mại biên giới cần ưu tiên đầu tư xây dựng trên cơ sở phù hợp với quy hoạch của mỗi Bên.

2. Hai Bên thống nhất lựa chọn và ưu tiên bố trí nguồn kinh phí để xây dựng ít nhất một (01) loại hình hạ tầng thương mại biên giới thuộc danh mục hạ tầng thương mại biên giới quy định tại khoản 1 của Điều này.

3. Căn cứ danh mục hạ tầng thương mại biên giới, các tỉnh biên giới hai Bên Việt Nam và Lào ưu tiên, khuyến khích và thu hút đầu tư phát triển hạ tầng thương mại biên giới phù hợp với nhu cầu thực tế và mục tiêu của Bản ghi nhớ.

Điều 6

Tổ chức thực hiện

1. Hai Bên giao cho Bộ Công Thương nước Cộng hòa xã hội chủ nghĩa Việt Nam và Bộ Công Thương nước Cộng hòa dân chủ nhân dân Lào là cơ quan đầu mối của hai Bên phối hợp với các Bộ, ngành và các tỉnh biên giới của hai Bên thực hiện Bản ghi nhớ.

2. Trong phạm vi chức năng, nhiệm vụ, chính quyền các tỉnh biên giới tương ứng của mỗi Bên có trách nhiệm kiểm tra, giám sát, đánh giá và ký kết các văn bản hợp tác trong khuôn khổ Bản ghi nhớ sau khi có ý kiến đồng ý của các Bộ, ngành liên quan của mỗi Bên.

Điều 7

Giải quyết tranh chấp

1. Mọi sự khác biệt hoặc tranh chấp liên quan tới giải thích hoặc thực hiện Bản ghi nhớ sẽ được giải quyết trên cơ sở tham vấn hoặc đàm phán giữa hai Bên.

2. Mọi yêu cầu tham vấn phải được lập thành văn bản bằng tiếng Việt hoặc tiếng Lào hoặc tiếng Anh gửi thông qua các cơ quan đầu mối quy định tại khoản 1 Điều 6 của Bản ghi nhớ.

Điều 8

Rà soát, sửa đổi, bổ sung

1. Trong thời hạn Bản ghi nhớ có hiệu lực, nếu một trong hai Bên muốn rà soát, sửa đổi hoặc bổ sung toàn bộ hay một phần nội dung các điều khoản đã ký kết thì phải có đề nghị bằng văn bản với bên còn lại.

2. Trong vòng 03 (ba) tháng, kể từ khi nhận được đề nghị của một Bên về việc rà soát, sửa đổi, bổ sung, Bên còn lại phải trả lời chính thức bằng văn bản.

3. Những rà soát, sửa đổi, bổ sung có hiệu lực từ ngày được hai Bên thỏa thuận. Các điều khoản đã được hai Bên nhất trí sửa đổi, bổ sung là bộ phận cấu thành không tách rời của Bản ghi nhớ.

Điều 9

Hiệu lực

1. Bản ghi nhớ có hiệu lực kể từ ngày ký và có hiệu lực trong vòng 03 (ba) năm.

2. Trong vòng 03 (ba) tháng trước khi Bản ghi nhớ hết hiệu lực, nếu không Bên nào thông báo bằng văn bản cho Bên kia về việc chấm dứt hiệu lực của Bản ghi nhớ, thì Bản ghi nhớ sẽ tự động kéo dài thêm ba (03) năm và sẽ tiếp tục được gia hạn theo thể thức đó.

3. Trong trường hợp Bản ghi nhớ hết hiệu lực, các điều khoản của Bản ghi nhớ vẫn được áp dụng cho các dự án và các hoạt động liên quan đang diễn ra được ký kết bởi 2 Bên theo Bản ghi nhớ cho đến khi các dự án và hoạt động đó được hoàn thành.

4. Bản ghi nhớ sẽ không ảnh hưởng tới quyền và nghĩa vụ của hai Bên ký kết được quy định tại các điều ước quốc tế khác có liên quan mà mỗi Bên là thành viên.

ĐỂ LÀM BẰNG, những người ký tên dưới đây đã được Chính phủ hai Bên ủy quyền ký Bản ghi nhớ.

Bản ghi nhớ ký tại Hà Nội, ngày 06 tháng 01 năm 2024, thành hai (02) bản chính, mỗi bản bằng tiếng Việt, tiếng Lào và tiếng Anh, các bản có giá trị pháp lý như nhau. Trong trường hợp có sự giải thích khác nhau, bản tiếng Anh được dùng làm cơ sở./.

THAY MẶT CHÍNH PHỦ	**THAY MẶT CHÍNH PHỦ**
NƯỚC CỘNG HÒA XÃ HỘI	**NƯỚC CỘNG HÒA DÂN CHỦ**
CHỦ NGHĨA VIỆT NAM	**NHÂN DÂN LÀO**
NGUYỄN HỒNG DIÊN	**MALAITHONG KOMMASITH**
BỘ TRƯỞNG BỘ CÔNG THƯƠNG	**BỘ TRƯỞNG BỘ CÔNG THƯƠNG**

ບົດບັນທຶກຄວາມເຂົ້າໃຈ
ກ່ຽວກັບ
ການພັດທະນາ ແລະ ເຊື່ອມໂຍງພື້ນຖານໂຄງລ່າງການຄ້າຊາຍແດນ
ລະຫວ່າງ
ລັດຖະບານ ແຫ່ງ ສສ ຫວຽດນາມ
ແລະ
ລັດຖະບານ ແຫ່ງ ສປປ ລາວ

ລັດຖະບານ ແຫ່ງ ສສ ຫວຽດນາມ ແລະ ລັດຖະບານ ແຫ່ງ ສປປ ລາວ (ຕໍ່ໄປເອີ້ນວ່າ "ສອງຝ່າຍ" ຫຼື ເອີ້ນສະເພາະແມ່ນ "ຝ່າຍ");

ເພື່ອແໃສ່ເພີ່ມທະວີສາຍພົວພັນມິດຕະພາບອັນຫຍິ່ງໃຫຍ່, ຄວາມສາມັກຄີພິເສດ, ການຮ່ວມມືຮອບດ້ານ, ການພັດທະນາແບບຍືນຍົງ, ສົ່ງເສີມການຄ້າຊາຍແດນ ລະຫວ່າງ ສອງປະເທດ ບົນພື້ນຖານຄວາມສະເໝີພາບ ແລະ ຕ່າງຝ່າຍຕ່າງມີຜົນປະໂຫຍດ.

ສອງຝ່າຍເຫັນດີເປັນເອກະພາບຮ່ວມລົງນາມບົດບັນທຶກຄວາມເຂົ້າໃຈສະບັບນີ້ ໂດຍມີເນື້ອໃນດັ່ງລຸ່ມນີ້:

ມາດຕາ 1
ນິຍາມ

ບາງຄຳສັບໃນບົດບັນທຶກຄວາມເຂົ້າໃຈສະບັບນີ້ ບາງຄຳສັບທີ່ໃຊ້ລຸ່ມນີ້ມີຄວາມໝາຍ ດັ່ງນີ້:

1. *ພື້ນຖານໂຄງລ່າງການຄ້າຊາຍແດນ* ປະກອບດ້ວຍບັນດາ ຕະຫຼາດຊາຍແດນ, ຫ້າງສັບພະສິນຄ້າ, ສູນການຄ້າ, ສູນການຊື້-ຂາຍ, ສູນກາງໂລຊິສຕິກ, ສາງສິນຄ້າ, ສູນຈັດງານຕະຫຼາດນັດ ແລະ ວາງສະແດງສິນຄ້າ ຢູ່ໃນບັນດາເມືອງ, ບ້ານ ຂອງ ຝ່າຍຫວຽດນາມ ແລະ ຝ່າຍລາວ ທີ່ມີເຂດແດນບໍລິຫານສ່ວນໜຶ່ງຕິດກັບຊາຍແດນແຫ່ງຊາດ ລະຫວ່າງ ສອງປະເທດ ຫວຽດນາມ-ລາວ (ຕາມທີ່ກຳນົດໃນສັນຍາ ວ່າດ້ວຍ ລະບຽບການຄຸ້ມຄອງຊາຍແດນ ແລະ ດ່ານຊາຍແດນທາງບົກ ລະຫວ່າງ ຫວຽດນາມ-ລາວ (ປີ 2016).
2. *ຜູ້ປະກອບການ* ປະກອບດ້ວຍບັນດາອົງການຈັດຕັ້ງ ຫຼື ນິຕິບຸກຄົນ, ບຸກຄົນ ທີ່ເຄື່ອນໄຫວອິດສະຫຼະ ແລະ ຂຶ້ນທະບຽນດຳເນີນທຸລະກິດ ຖືກຕ້ອງຕາມລະບຽບກົດໝາຍຂອງແຕ່ລະຝ່າຍ;
3. *ແຂວງຊາຍແດນ* ໃນບົດບັນທຶກຄວາມເຂົ້າໃຈສະບັບນີ້ ປະກອບມີ:

- ແຂວງຊາຍແດນຝ່າຍ ຫວຽດນາມ ປະກອບມີ: ດຽນບຽນ, ເຊີນລາ, ແທ່ງຮົວ, ເງະອານ, ຮ່າຕິ້ງ, ກວາງ ບິ້ງ, ກວາງຈິ, ເຫືອທຽນ-ເຫວ້, ກວາງນາມ ແລະ ກອນຕຸມ.
- ແຂວງຊາຍແດນຝ່າຍ ລາວ ປະກອບມີ: ຜົ້ງສາລີ, ຫຼວງພະບາງ, ຫົວພັນ, ຊຽງຂວາງ, ບໍລິຄຳໄຊ, ຄຳ ມ່ວນ, ສະຫວັນນະເຂດ, ສາລະວັນ, ເຊກອງ ແລະ ອັດຕະປື.

ມາດຕາ 2
ເປົ້າໝາຍ

ເພີ່ມທະວີການຮ່ວມມື ລະຫວ່າງ ຫວຽດນາມ ແລະ ລາວ ກ່ຽວກັບ ການພັດທະນາ ແລະ ເຊື່ອມໂຍງ ພື້ນຖານໂຄງລ່າງການຄ້າຊາຍແດນ ບົນພື້ນຖານຄວາມສະເໝີພາບ, ຕ່າງຝ່າຍຕ່າງມີຜົນປະໂຫຍດ, ນັບຖືຄວາມ ເປັນເອກະລາດ, ອະທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນຂອງກັນ ຖືກຕ້ອງຕາມລະບຽບກົດໝາຍຂອງແຕ່ລະ ປະເທດ ແລະ ສົນທິສັນຍາສາກົນ ທີ່ແຕ່ລະຝ່າຍເຂົ້າຮ່ວມເປັນພາຄີ.

ມາດຕາ 3
ຂອບເຂດການຮ່ວມມື

1. ແລກປ່ຽນຂໍ້ມູນຂ່າວສານ ກ່ຽວກັບ ສະພາບການກໍ່ສ້າງ ແລະ ພັດທະນາພື້ນຖານໂຄງລ່າງການຄ້າຊາຍ ແດນ ລະຫວ່າງສອງຝ່າຍ;

2. ຊ່ວຍເຫຼືອໃນການກໍ່ສ້າງ ແລະ ພັດທະນາພື້ນຖານໂຄງລ່າງການຄ້າຊາຍແດນຂອງທັງສອງຝ່າຍ;

3. ສົ່ງເສີມພາກທຸລະກິດຂອງທັງ ຫວຽດນາມ ແລະ ລາວ ລົງທຶນກໍ່ສ້າງ ແລະ ພັດທະນາພື້ນຖານໂຄງລ່າງ ການຄ້າຢູ່ເຂດຊາຍແດນ;

4. ແລກປ່ຽນບົດຮຽນ ກ່ຽວກັບ ບັນດາລະບຽບການ, ກົດໝາຍ, ແຜນການກໍ່ສ້າງ ແລະ ພັດທະນາ ພື້ນຖານໂຄງລ່າງການຄ້າຊາຍແດນ;

5. ຮ່ວມມືພັດທະນາ ແລະ ກໍ່ສ້າງບຸກຄະລາກອນ ໃຫ້ແກ່ບັນດາຫ້ອງການຄຸ້ມຄອງພາກລັດ ແລະ ພາກ ທຸລະກິດ ຂອງທັງສອງຝ່າຍ ໃນຂົງເຂດການພັດທະນາພື້ນຖານໂຄງລ່າງການຄ້າຊາຍແດນ;

6. ປະສານສົມທົບກັນຈັດຕັ້ງບັນດາກິດຈະກຳສົ່ງເສີມການຄ້າຊາຍແດນ ແລະ ການລົງທຶນ ແນໃສ່ພັດທະ ນາພື້ນຖານໂຄງລ່າງການຄ້າຢູ່ເຂດຊາຍແດນ ຫວຽດນາມ-ລາວ; ແລະ

7. ບັນດາເນື້ອໃນການຮ່ວມມືອື່ນ ທີ່ທັງສອງຝ່າຍໄດ້ເປັນເອກະພາບຮ່ວມກັນ.

ມາດຕາ 4
ງົບປະມານ

1. ການຈັດສັນງົບປະມານ ໃນການຈັດຕັ້ງປະຕິບັດບັນດາເນື້ອໃນການຮ່ວມມື ໃນຂອບຂອງບົດບັນທຶກ ຄວາມເຂົ້າໃຈສະບັບນີ້ ສອງຝ່າຍ ຈະເປັນເອກະພາບຮ່ວມກັນຕາມແຕ່ລະກໍລະນີເປັນອັນສະເພາະ ບົນພື້ນຖານ ການໃຫ້ບຸລິມະສິດໃນການພັດທະນາ ແລະ ເຊື່ອມໂຍງພື້ນຖານໂຄງລ່າງການຄ້າຊາຍແດນ ໂດຍສອດຄ່ອງກັບ ບັນດາຂໍ້ກຳນົດ ແລະ ລະບຽບກົດໝາຍຂອງແຕ່ລະຝ່າຍ.

2. ແຕ່ລະຝ່າຍ ຈະພິຈາລະນາຈັດສັນງົບປະມານສະເພາະໃຫ້ແຕ່ລະໂຄງການ ບົນພື້ນຖານຄວາມສອດຄ່ອງ ໃນການຈັດສັນງົບປະມານ ແລະ ແຫຼ່ງທຶນ ຂອງແຕ່ລະຝ່າຍ.

ມາດຕາ 5
ການສົ່ງເສີມພັດທະນາພື້ນຖານໂຄງລ່າງການຄ້າຊາຍແດນ

1. ສອງຝ່າຍ ຈະຮ່ວມກັນລົງສຳຫຼວດພື້ນຖານໂຄງລ່າງການຄ້າຊາຍແດນ ແລະ ເປັນເອກະພາບກັນສ້າງ ບັນຊີໂຄງລ່າງພື້ນຖານການຄ້າຊາຍແດນທີ່ເປັນບຸລິມະສິດໃນການລົງທຶນກໍ່ສ້າງ ໂດຍແທດເໝາະກັບແຜນແມ່ ບົດຂອງແຕ່ລະຝ່າຍ.

2. ສອງຝ່າຍ ເປັນເອກະພາບຮ່ວມກັນໃນການຄັດເລືອກເອົາປະເພດພື້ນຖານໂຄງລ່າງການຄ້າຊາຍແດນ ທີ່ໄດ້ລະບຸໄວ້ໃນຂໍ້ 1 ຂອງມາດຕານີ້ ແລ້ວລາຍງານລັດຖະບານຂອງທັງສອງຝ່າຍ ເພື່ອພິຈາລະນາໃຫ້ບຸລິມະສິດຈັດສັນງົບປະມານໃນການກໍ່ສ້າງຢ່າງໜ້ອຍໃຫ້ໄດ້ຕະຫຼາດຊາຍແດນໜຶ່ງ (01) ແຫ່ງ.

3. ອີງໃສ່ບັນຊີປະເພດພື້ນຖານໂຄງລ່າງການຄ້າຊາຍແດນ ບັນດາແຂວງຊາຍແດນຂອງທັງສອງຝ່າຍ ຫວຽດນາມ ແລະ ລາວ ຈະໃຫ້ບຸລິມະສິດພິເສດ, ສົ່ງເສີມ ແລະ ດຶງດູດການລົງທຶນເຂົ້າມາພັດທະນາພື້ນຖານໂຄລ່າງການຄ້າຊາຍແດນ ໂດຍແທດເໝາະກັບຄວາມຕ້ອງການຕົວຈິງ ແລະ ເປົ້າໝາຍຂອງບົດບັນທຶກຄວາມເຂົ້າໃຈ.

ມາດຕາ 6
ການຈັດຕັ້ງປະຕິບັດ

1. ສອງຝ່າຍ ເຫັນດີເປັນເອກະພາບ ມອບສິດໃຫ້ ກະຊວງອຸດສາຫະກຳ ແລະ ການຄ້າ ແຫ່ງ ສສ ຫວຽດນາມ ແລະ ກະຊວງອຸດສາຫະກຳ ແລະ ການຄ້າ ແຫ່ງ ສປປ ລາວ ເປັນຈຸດປະສານງານຂອງທັງສອງຝ່າຍ ໃນການປະສານສົມທົບກັບບັນດາ ກະຊວງ, ອົງການ ແລະ ບັນດາແຂວງຊາຍແດນຂອງທັງສອງຝ່າຍ ໃນການຈັດ ຕັ້ງປະຕິບັດບົດບັນທຶກຄວາມເຂົ້າໃຈສະບັບນີ້.

2. ໂດຍປະຕິບັດຕາມສິດ ແລະ ໜ້າທີ່ ອຳນາດການປົກຄອງແຂວງທີ່ມີຊາຍແດນຕິດຈອດກັນຂອງທັງສອງຝ່າຍມີໜ້າທີ່ຕິດຕາມ, ກວດກາ, ຕີລາຄາ ແລະ ລົງນາມບັນດາເອກະສານການຮ່ວມມືຕາມຂອບຂອງບົດບັນທຶກຄວາມເຂົ້າໃຈສະບັບນີ້ ພາຍຫຼັງໄດ້ຮັບການເຫັນດີຈາກ ກະຊວງ, ຂະແໜງການກ່ຽວຂ້ອງ ຂອງແຕ່ລະຝ່າຍ.

ມາດຕາ 7
ການແກ້ໄຂຂໍ້ຂັດແຍ່ງ

1. ທຸກຄວາມແຕກຕ່າງ ຫຼື ຂໍ້ຂັດແຍ່ງ ທີ່ເກີດຈາກການຕີຄວາມໝາຍ ຫຼື ການຈັດຕັ້ງຜັນຂະຫຍາຍເນື້ອໃນຂອງບົດບັນທຶກຄວາມເຂົ້າໃຈສະບັບນີ້ ແມ່ນຈະໄດ້ຮັບການແກ້ໄຂບົນພື້ນຖານການປຶກສາຫາລື ຫຼື ເຈລະຈາ ລະຫວ່າງ ສອງຝ່າຍ.

2. ທຸກໆ ການສະເໜີເພື່ອປຶກສາຫາລື ຈະຕ້ອງແຈ້ງເປັນລາຍລັກອັກສອນ ທີ່ເປັນພາສາລາວ ຫຼື ພາສາ ຫວຽດ ຫຼື ພາສາອັງກິດ ສົ່ງຜ່ານຈຸດປະສານງານທີ່ກຳນົດໄວ້ໃນຂໍ້ 1 ມາດຕາ 6 ຂອງບົດບັນທຶກຄວາມເຂົ້າໃຈ ສະບັບນີ້.

ມາດຕາ 8
ການດັດແກ້ເນື້ອໃນ

1. ໃນໄລຍະທີ່ ບົດບັນທຶກຄວາມເຂົ້າໃຈສະບັບນີ້ ຍັງມີຜົນສັກສິດ, ຖ້າຫາກຝ່າຍໃດຝ່າຍໜຶ່ງມີຈຸດປະສົງ ໃນການດັດແກ້ເນື້ອໃນທັງໝົດ ຫຼື ບາງສ່ວນ ຂອງບົດບັນທຶກຄວາມເຂົ້າໃຈສະບັບນີ້ໄດ້ ໂດຍແຈ້ງການເປັນລາຍລັກອັກສອນໃຫ້ອີກຝ່າຍໜຶ່ງຊາບ.

2. ພາຍຫຼັງທີ່ຝ່າຍໃດຝ່າຍໜຶ່ງໄດ້ຮັບໜັງສືສະເໜີໃນການປັບປຸງ, ແກ້ໄຂ ຕ້ອງແຈ້ງຕອບຄືນຢ່າງເປັນລາຍລັກອັກສອນ ພາຍໃນເວລາ 03 (ສາມ) ເດືອນ.

3. ບັນດາເນື້ອໃນທີ່ໄດ້ດັດແກ້ ຈະມີຜົນສັກສິດນັບແຕ່ມື້ທີ່ສອງຝ່າຍໄດ້ເຫັນດີເປັນເອກະພາບ ແລະ ລົງນາມຮ່ວມກັນ. ບັນດາມາດຕາ ທີ່ທັງສອງຝ່າຍໄດ້ເປັນເອກະພາບກັນດັດແກ້, ປັບປຸງ ແມ່ນເປັນສ່ວນໜຶ່ງທີ່ບໍ່ສາມາດແຍກອອກຈາກ ບົດບັນທຶກຄວາມເຂົ້າໃຈສະບັບນີ້.

ມາດຕາ 9
ຜົນສັກສິດ

1. ບົດບັນທຶກຄວາມເຂົ້າໃຈສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງນາມເປັນຕົ້ນໄປ ແລະ ມີອາຍຸ 03 (ສາມ) ປີ.

2. ໃນລະຫວ່າງ 03 (ສາມ) ເດືອນ ກ່ອນທີ່ບົດບັນທຶກຄວາມເຂົ້າໃຈສະບັບນີ້ ຈະໝົດອາຍຸ, ຖ້າຫາກບໍ່ມີຝ່າຍໃດໜຶ່ງ ແຈ້ງເປັນລາຍລັກອັກສອນເຖິງເຈດຈຳນົງຂອງຕົນ ທີ່ຕ້ອງການຍົກເລີກບົດບັນທຶກຄວາມເຂົ້າໃຈສະບັບນີ້ ໃຫ້ອີກຝ່າຍຊາບ, ໄລຍະເວລາຂອງການຮ່ວມມືພາຍໃຕ້ບົດບັນທຶກຄວາມເຂົ້າໃຈສະບັບນີ້ ຈະໄດ້ຮັບການຕໍ່ອາຍຸໂດຍອັດຕະໂນມັດຕື່ມອີກສາມ (03) ປີ ແລະ ຈະໄດ້ຮັບການຕໍ່ອາຍຸໄປເລື້ອຍໆດ້ວຍຮູບການນີ້.

3. ໃນກໍລະນີທີ່ບົດບັນທຶກຄວາມເຂົ້າໃຈນີ້ໝົດຜົນສັກສິດ, ບັນດາຂໍ້ກຳນົດທີ່ໄດ້ລະບຸໄວ້ໃນບົດບັນທຶກຄວາມເຂົ້າໃຈ ຈະຍັງຖືກນຳໃຊ້ກັບບັນດາໂຄງການ ແລະ ການເຄື່ອນໄຫວກິດຈະກຳຕ່າງໆທີ່ຍັງສືບຕໍ່ດຳເນີນການທີ່ສອງຝ່າຍໄດ້ເຊັນຮ່ວມກັນກ່ອນໜ້ານີ້ ຈົນກ່ວາບັນດາໂຄງການ ແລະ ການເຄື່ອນໄຫວເຫຼົ່ານັ້ນຈະຖືກຈັດຕັ້ງປະຕິບັດຈົນສຳເລັດ.

4. ບົດບັນທຶກຄວາມເຂົ້າໃຈສະບັບນີ້ ຈະບໍ່ກະທົບຕໍ່ບັນດາສິດ ແລະ ພັນທະ ຂອງທັງສອງຝ່າຍ ທີ່ໄດ້ຮ່ວມລົງນາມໃນບັນດາສົນທິສັນຍາສາກົນ ທີ່ແຕ່ລະຝ່າຍຮ່ວມເປັນພາຄີ.

ເພື່ອເປັນຫຼັກຖານ, ຜູ້ຕາງໜ້າທີ່ໄດ້ຮັບມອບໝາຍສິດອຳນາດຢ່າງຖືກຕ້ອງຈາກລັດຖະບານຂອງຕົນ ຈຶ່ງໄດ້ລົງນາມໃນບົດບັນທຶກຄວາມເຂົ້າໃຈສະບັບນີ້.

ບົດບັນທຶກຄວາມເຂົ້າໃຈສະບັບນີ້, ລົງນາມທີ່ ນະຄອນຫຼວງຮ່າໂນ້ຍ, ໃນວັນທີ 06 ເດືອນ ມັງກອນ ປີ 2024, ເປັນສອງ (02) ສະບັບຕົ້ນ, ເປັນພາສາຫວຽດ, ພາສາລາວ ແລະ ພາສາອັງກິດ, ແຕ່ລະສະບັບລ້ວນແຕ່ມີຄຸນຄ່າທາງດ້ານກົດໝາຍເທົ່າທຽມກັນ. ໃນກໍລະນີ ມີຄວາມແຕກຕ່າງກັນໃນການຕີຄວາມໝາຍ ແມ່ນຖືເອົາສະບັບພາສາອັງກິດເປັນອັນປຽບທຽບ.

ຕາງໜ້າລັດຖະບານ ແຫ່ງ ສສ ຫວຽດນາມ	ຕາງໜ້າລັດຖະບານ ແຫ່ງ ສປປ ລາວ
ລັດຖະມົນຕີ	ລັດຖະມົນຕີ
ກະຊວງອຸດສາຫະກຳ ແລະ ການຄ້າ	ກະຊວງອຸດສາຫະກຳ ແລະ ການຄ້າ

MEMORANDUM OF UNDERSTANDING

ON

DEVELOPMENT AND CONNECTION OF BORDER TRADE INFRASTRUCTURE

BETWEEN

THE GOVERNMENT OF THE SOCIALIST REPUBLIC OF VIET NAM

AND

THE GOVERNMENT OF THE LAO PEOPLE'S DEMOCRATIC REPUBLIC

The Government of the Socialist Republic of Viet Nam and the Government of the Lao People's Democratic Republic (hereinafter jointly referred to as the "Parties" and individually referred to as "Party");

In order to strengthen great friendship, special solidarity and comprehensive cooperation, sustainable development, promoting the border trade between the two countries on the basis of equality and mutual benefits,

The Parties have reached the following understanding:

Article 1

Definition of terms

In this Memorandum of Understanding (hereinafter referred to as "MoU"), the following terms shall be construed:

1. *Border trade infrastructure* includes border markets, supermarkets, trade centers, shopping centers, logistics centers, warehouses, fair and exhibition centers in the area of communes and wards, townships for Viet Nam, villages for Laos, with a part of the administrative boundary coinciding with the national border areas between the two countries Viet Nam - Laos (as prescribed in the Agreement on Management Protocol for the Viet Nam – Laos Land Border and Border Posts in 2016).

2. *Traders* include organizations, individuals and business households operating independently, regularly and having business registrations in accordance with laws and regulations of each country.

3. *Border provinces* in this MoU include:

a) Vietnamese side: Dien Bien, Son La, Thanh Hoa, Nghe An, Ha Tinh, Quang Binh, Quang Tri, Thua Thien Hue, Quang Nam, Kon Tum.

b) Lao side: Phongsaly, Luang Prabang, Huaphanh, Xiengkhuang, Borikhamxay, Khammuane, Savannakhet, Saravane, Sekong, Attapeu.

Article 2

Objectives

Establish and strengthen the cooperation between Viet Nam and Laos on development and connection of border trade infrastructure on the basis of equality and mutual benefits, respect for each other's independence, sovereignty and territorial integrity, in compliance with their respective national legislations and international treaties to which either Party is a member.

Article 3

Scope of Cooperation

1. Exchange information on the establishment and development of border trade infrastructure of each Party;

2. Provide assistance to establish and develop border trade infrastructure;

3. Encourage investment activities of Vietnamese and Lao traders in establishment and development of border trade infrastructure;

4. Exchange experiences on the legal framework and development plan of border trade infrastructure;

5. Cooperate in exchanging human resources development and training for state management agencies and traders of the Parties in the field of border trade infrastructure;

6. Cooperate in organizing trade and investment promotion activities to facilitate Viet Nam – Laos border trade infrastructure; and

7. Cooperate in any other areas as may be mutually decided by the Parties.

Article 4

Budgets

1. The financial arrangement to cover expenses for the cooperative activities undertaken within the framework of this MoU shall be mutually decided by the Parties on a case-by-case priority basis and agreed by the Parties to develop and connect border trade infrastructure.

2. Each Party may allocate the budget for each specific project in accordance with the ability to allocate budgets and resources of each Party.

Article 5

Promoting the border trade infrastructure

1. Both Parties shall conduct a joint survey of border trade infrastructure and agree to make the list of border trade infrastructure prioritized for investment and construction in accordance with the planning of each Party.

2. Both Parties agree to select and give prioritize budget allocation for the construction of at least one (01) type of border trade infrastructure in the list of border trade infrastructure that specified in Clause 1 of this Article.

3. Based on the list of border trade infrastructure, border provinces between Viet Nam and Laos shall prioritize to encourage and attract investment of border trade infrastructure in accordance with actual needs and objectives of this MoU.

Article 6

Implementation

1. Both Parties agreed to assign the Ministry of Industry and Trade of the Socialist Republic of Viet Nam and the Ministry of Industry and Commerce of the Lao People's Democratic Republic as the focal points to coordinate with the relevant Ministries, agencies and border provinces of the two countries in the implementation of this MoU.

2. Within the scope of functions and duties, the authorities of the respective border provinces of each Party are responsible for monitoring, inspecting, and signing relevant specific agreements based on this MoU after the approval of the relevant Ministries, agencies of each Party.

Article 7

Settlement of Disputes

1. Any differences or disputes relating to the interpretation or application of this MoU shall be amicably settled on the basis of consultations between the Parties.

2. Any requests for consultation shall be made in writing in Vietnamese or Lao or English and sent through the focal points specified in Clause 1, Article 6 of this MoU.

Article 8

Revision, amendment and modification

1. Within the validity of this MoU, either Party may request a revision, amendment or modification of all or any part of this MoU by giving written notice to the other Party.

2. Within three (03) months after receiving the request for revision, amendment or modification, the other Party has to give an official response in written document.

3. Such revision, amendment or modification shall come into effect on a date as may be determined by the Parties. Any revision, amendment or modification agreed by the Parties shall form an integral part of this MoU.

Article 9

Effective date

1. This MoU shall be effective from the date of signing and shall remain effective for a period of three (03) years.

2. Within three (03) months before this MoU expires, if neither Party give a written notice to the other Party expresses its intention to terminate this MoU, the period of cooperation under this MoU will be automatically extended for another three (03) years with the original manner of extention.

3. In case the effect of the MoU ends, the provisions of the MoU will continue to apply to ongoing projects and related activities, and it will continue to be implemented until those projects and activities are completed.

4. This MoU shall not affect the rights and obligations of the Parties stipulated in other international treaties to which each Party is a party.

IN WITNESS WHEREOF, the undersigned, being duly authorized by their respective Governments, have signed this MoU.

Done in Ha Noi, on January 2024, in two (02) originals, each in the Vietnamese, Lao and English languages with same legal value. In case of any divergence in interpretation, the English version shall prevail.

FOR THE GOVERNMENT OF THE SOCIALIST REPUBLIC OF VIET NAM	FOR THE GOVERNMENT OF THE LAO PEOPLE'S DEMOCRATIC REPUBLIC
NGUYEN HONG DIEN	MALAITHONG KOMMASITH
MINISTER OF INDUSTRY AND TRADE	MINISTER OF INDUSTRY AND TRADE